Ottawa County Health Department

# ໂຣກຕັບອັກເສບຊະນິດ C [HEPATITIS C]

## ໂຣກຕັບອັກເສບຊະນິດ C ຄືຫຍັງ?

ໂຣກຕັບອັກເສບຊະນິດ C ເປັນໂຣກເຊິ່ງເກີດຈາກວາຍຣັສ. 80% ຂອງຈຳນວນຄົນທີ່ຕິດແທດເຊື້ອໂຣກນີ້ຈະບໍ່ມີອາການໃດທັງໝົດ.

## ໂຣກຕັບອັກເສບຊະນິດ C ແຜ່ລາມແນວໃດ?

ໂຣກຕັບອັກເສບຊະນິດ C ຈະແຜ່ລາມໄດ້ໃນວິທີດັ່ງຕໍ່ໄປນີ້:

- ເລືອດໃນຮ່າງກາຍຂອງຄົນທີ່ມີໂຣກນີ້ເຂົ້າໄປໃນຮ່າງກາຍຂອງຄົນທີ່ມີເຊື້ອໂຣກນີ້. ແບບນີ້ສາມາດເກີດຂຶ້ນໄດ້ໃນຫລາຍໆວິທີ, ເຊິ່ງຮ່ວມດ້ວຍ:
    - ການໃຊ້ເຂັມສັກຢາຮ່ວມກັນ
    - ການຮ່ວມເພດນຳຄົນທີ່ມີໂຣກຕັບອັກເສບຊະນິດ C
    - ການແຜ່ລາມເຖິງແອນ້ອຍຈາກແມ່ທີ່ມີໂຣກຕັບອັກເສບຊະນິດ C ຕອນຄອດລູກ
    - ໃຊ້ແປງຖູແຂ້ວ ຫລື ມີດແຖນຳຄົນທີ່ມີໂຣກຕັບອັກເສບຊະນິດ C
    - ໄດ້ຮັບເລືອດຈາກຄົນທີ່ມີໂຣກຕັບອັກເສບຊະນິດ C (ບໍ່ມີການກວດເບິ່ງເລືອດວ່າເປັນໂຣກຕັບອັກເສບຊະນິດ C ໃນສະຫະລັດ ອາເມຣິກາ ຈົນເຖິງປີ 1992 ເດືອນ ກໍລະກົດ)
    - ມີການລ້າງເລືອດເປັນລະຍະຍາວ

## ອາການບາງຢ່າງມີຫຍັງແດ່?

ອາການອາດຈະຮ່ວມດ້ວຍ:

- ຕາ ແລະ ຜີວຈະເປັນສີເຫລືອງ (ຈອນດິສ)
- ອິດເມື່ອຍຢ່າງໜັກ
- ຍ່ຽວເປັນສີດຳ
- ປວດທ້ອງ
- ບໍ່ຫິວເຂົ້າ
- ປຸ້ນທ້ອງປວດຮາກ ແລະ ຮາກ

## ຈະກວດພົບໂຣກຕັບອັກເສບຊະນິດ C ໄດ້ແນວໃດ?

ໂດຍການກວດເບິ່ງເລືອດໂດຍສະເພາະສຳລັບໂຣກຕັບອັກເສບຊະນິດ C.

## ຈະຮັກສາໂຣກຕັບອັກເສບຊະນິດ C ໄດ້ດ້ວຍວິທີໃດ?

ບໍ່ມີວິທີຮັກສາໃຫ້ເຊົາສຳລັບໂຣກຕັບອັກເສບຊະນິດ C. ຄົນຫລາຍກວ່າເຄິ່ງໜຶ່ງທີ່ເປັນພະຍາດນີ້ຈະມີພະຍາດນີ້ຕະຫລອດຊີວິດ. ໃນຈຳນວນຄົນເປັນພະຍາດນີ້ຕະຫລອດຊີວິດ, 70% ຈະມີໂຣກຕັບເພີ່ມອີກ. ຄົນໄຂ້ບາງຄົນອາດຈະຕອບຮັບຕໍ່ການຮັກສາດ້ວຍຢາຢ່າງໃດຢ່າງໜຶ່ງ.

## ຈະປ້ອງກັນຈາກໂຣກຕັບອັກເສບຊະນິດ C ດ້ວຍວິທີໃດ?

- ຫລີກລ້ຽງຈາກການຕິດແທດນຳເລືອດ ຫລື ສິ່ງທີ່ເຮັດດ້ວຍເລືອດ.
- ຫ້າມໃຊ້ຢາ ແລະ ໃຊ້ເຂັມສັກຢາຮ່ວມກັນ.
- ຫ້າມໃຊ້ສິ່ງທຳຄວາມສະອາດສ່ວນຕົວຮ່ວມກັນດັ່ງເຊັ່ນແປງຖູແຂ້ວ ຫລື ມີດແຖ.
- ຖ້າຫາກທ່ານມີໂຣກຕັບອັກເສບຊະນິດ C ຢ່າແຈກເລືອດ ຫລື ອະໄວຍະວະອື່ນໆ.
- ບໍ່ມີຢາສັກປ້ອງກັນສຳລັບໂຣກຕັບອັກເສບຊະນິດ C.

## ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໂຣກຕັບອັກເສບຊະນິດ C ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org
Center for Disease Control and Prevention
http://www.cdc.gov/ncidod/diseases/hepatitis/c/fact.htm
Phone: (888) 246-2675
Michigan Department of Community Health
http://www.michigan.gov/documents/mdch/Hepatitis_C_Fact_Sheet_196974_7.pdf
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org